**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 637 /ຫຄຊກລ.ຄສບ

ນະຄອນຫລວງວຽງຈັນ, ວັນທີ 01 ກໍລະກົດ ໒໐໒໔

# ບົດບັນທຶກ ກອງປະຊຸມວິຊາການ
# ການຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 2, 2024

## I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການຄຸ້ມຄອງກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2024. ໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂອງ ຫ້ອງການ ຄຊກລ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ດວງສີ ທຳມະວົງ, ຮອງຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ວິຊາການຕາງໜ້າຈາກອົງການສະຫະປະຊາຊາດ, ຫົວໜ້າໜ່ວຍງານໂຄສະນາສຶສາຄວາມສ່ຽງໄພຈາກ ລບຕ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 10 ອົງການມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ, ອົງການ HI, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ອົງການ World Education ແລະ ຊ່ຽວຊານຈາກ ສປຊ, ວິຊາການຮັບຜິຊອບວຽກໂຄສະນາຂອງ ສປຊ, ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ຫົວໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ,ທີມງານໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງ ຫ້ອງການ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດຈຳນວນ 36 ທ່ານ ລວມທັງເຂົ້າຮ່ວມທາງອອນລາຍ ຍິງ 15 ທ່ານ.

## II ຈຸດປະສົງ

- ສະຫຼຸບການຈັດຕັ້ງປະຕິບັດວຽກງານໂຄສະນາ ຂອງການປະຕິບັດງານໃນ 6 ເດືອນ ຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ, ຂໍ້ສະກວດ ແລະ ຂໍ້ຫຍຸ້ງຍາກ ຂອງການປະຕິບັດງານ ພ້ອມທິດທາງແຜນການໃນການແກ້ໄຂຕໍ່ໜ້າ.
- ລາຍງານການເກີດອຸປະຕິເຫດ
- ລາຍງານຄວາມຄືບໜ້າເຂົ້າໃນການປັບປຸງມາດຕະຖານແຫ່ງຊາດ ກ່ຽວກັບວຽກໂຄສະນາ ບົດທີ່ 13.
- ນຳສະເໜີການລາຍງານຜົນສຳເລັດເຂົ້າໃນຖານຂໍ້ມູນແຫ່ງຊາດ ຂອງອົງການປະຕິບັດງານ.
- ເພື່ອແລກປ່ຽນທາງດ້ານເທັກນິກວິຊາການກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ, ດ້ານດີ ດ້ານອ່ອນ ແລະ ຂໍ້ຄົງຄ້າງ.
- ທົບທວນຜົນຂອງກອງປະຊຸມທີ່ຜ່ານມາ.
- ທວນຄືນໂດຍຫຍໍ້ກ່ຽວກັບອຸປະກອນການໂຄສະນາ ຂອງອົງການປະຕິບັດງານ.
- ນຳສະເໜີພາບລວມກ່ຽວກັບ ການຝຶກອົບຮົມດ້ານບົດບາດຍິງຊາຍ.
- ຂໍ້ມູການໂຄສະນາທີ່ລາຍງານເຂົ້າມາໃນຖານຂໍ້ມູນ.
- ໜ່ວຍງານຄຸ້ມຄອງຖານຂໍ້ມູນນຳສະເໜີໂດຍຫຍໍ້ກ່ຽວກັບຂັ້ນຕອນ ສົ່ງຂໍ້ມູນເຂົ້າມາຫາຖານຂໍ້ມູນແຫ່ງຊາດ.
- ລາຍງານຫຍໍ້ກ່ຽວກັບການເກີດອຸປະຕິເຫດ ໃນໄຕມາດ 1 ແລະ ໄຕມາດ 2, 2024.
- ອົງການປະຕິບັດງານລາຍງານຄວາມຄືບໜ້າກ່ຽວກັບການລົງໂຄສະນາຄືນບ້ານທີ່ເກີດອຸປະຕິເຫດ.
- ບັນຫາອື່ນໆທີ່ຕິດພັນ.

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 13:30 ໂມງ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດກອງປະຊຸມໄດ້ຮັບຊາບການລາຍງານ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

- ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານໂຄສະນາ ໃນ 6 ເດືອນຕົ້ນປີ ແລະ ແຜນ 6 ເດືອນທ້າຍປີ 2024. ທົບທວນໂດຍຫຍໍ້ພາບລວມກ່ຽວກັບການຄຸ້ມຄອງ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ເປັນຕົ້ນແມ່ນວຽກການປະສານງານ ກັບພາກສ່ວນອື່ນໆ ເພື່ອປັບປຸງໃຫ້ມັນດີຂຶ້ນ.
- ອົງການ ສປຊ ໄດ້ນຳສະເໜີພາບລວມ ແລະ ຂະບວນການຄືບໜ້າໃນການປັບປຸງມາດຕະຖານແຫ່ງຊາດ ບົດທີ່ 13 ທີ່ຕິດພັນກັບວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ, ຊຶ່ງໃນນີ້ແມ່ນ ອົງການ HI ເປັນຫຼັກໃນການນຳພາຄົ້ນຄ້ວາ ພ້ອມ ອົງການປະຕິບັດງານອື່ນໆ ມີຄຳເຫັນປະກອບໃສ່ໃນການປັບປຸງຄັ້ງນີ້.
- ໜ່ວຍງານໂຄສະນາໄດ້ຮ່າງ ແລະ ປັບປຸງແບບຟອມການລາຍງານເຂົ້າໃນຖານຂໍ້ມູນ ເປັນຕົ້ນແມ່ນ ແບບຟອມການລາຍງານຂອງວິທະຍຸ 10 ແຂວງ ທີ່ໄດ້ເຮັດໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ, ແບບຟອມລາຍງານຂອງອາສາສະໝັກບ້ານ, ແບບຟອມການລາຍງານອົງການປະຕິບັດງານ ແລະ ນອກຈາກນີ້ໜ່ວຍງານກໍ່ໄດ້ລາຍງານຜົນຂອງການລົງຕິດຕາມວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງອົງການປະຕິບັດງານ.
- ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ລາຍງານຄວາມຄືບໜ້າຂອງການເກີດອຸປະຕິເຫດໃນໄຕມາດ1 ແລະ ໄຕມາດ 2, 2024, ຊຶ່ງເຫັນວ່າຕົວເລກຜູ້ຖືກເຄາະຮ້າຍເພີ່ມຂຶ້ນໃນປີ 2024 ຢ່າງໄວ.
- ຊ່ຽວຊານຈາກອົງການເອັນພີເອໄດ້ນຳສະເໜີວິທີການປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນແຫ່ງຊາດ ສະເພາະວຽກງານໂຄສະນາສຶກສາຄວາມສ່ຽງໄພ.
- ອົງການປະຕິບັດງານໄດ້ລາຍງານຜົນຂອງການລົງໂຄສະນາສຸກເສີນກໍ່ຄືລົງໂຄສະນາຄືນບ້ານທີ່ເກີດອຸປະຕິເຫດທີ່ຢູ່ໃນຂອບເຂດ ແລະ ບ້ານທີ່ອົງການຮັບຜິຊອບ.
- ບັນດາອົງການປະຕິບັດງານ ທີ່ເຂົ້າຮ່ວມ ລາຍງານຜົນການຈັດຕັ້ງປະຕິບັດ ແລະ ບັນຫາການປະຕິບັດງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນໄຕມາດ 01 ແລະ ໄຕມາດ 2 ແລະ ນຳສະເໜີທິດທາງແຜນການໃນປີ 2024, ສິ່ງທ້າທາຍ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ໃນ 6 ເດືອນຕົ້ນປີ ພ້ອມຂໍ້ສະເໜີຕ່າງໆ.
- ນອກຈາກນີ້ຍັງມີພາກສ່ວນອື່ນໆທີ່ໄດ້ແລກປ່ຽນຄຳຄິດເຫັນ ແລະ ສົນທະນາໃນກອງປະຊຸມ.

## V. ຂໍ້ສະເໜີ ແລະ ຂໍ້ຫຍຸ້ງຍາກ

- ສາເຫດທີ່ພາໃຫ້ເກີດອຸປະຕິເຫດແມ່ນຍ້ອນສະພາບເສດຖະກິດການເງິນມີການເຄື່ອນໜັງຫຼາຍ ຈຶ່ງເຮັດໃຫ້ການຂະຫຍາຍການພະລິດເປັນວົງກວ້າງ, ສະນັ້ນຈຶ່ງເຮັດໃຫ້ເກີດມີຄວາມສ່ຽງຫຼາຍ ແລະ ເກີດອຸປະຕິຫຼາຍກວ່າປີຜ່ານໆມາ.
- ການກວດກູ້ພື້ນທີ່ຍັງມີຄວາມຈຳກັດ, ສະນັ້ນ ເຮັດໃຫ້ ເປັນສິ່ງທ້າທາຍຫຼາຍ ແລະ ມີຄວາມສ່ຽງຫຼາຍ.
- ກອງປະຊຸມສະເໜີໃຫ້ອົງການປະຕິບັດງານປະຕິບັດງານທົບທວນຄືນກ່ຽວກັບສາເຫດທີ່ພາໃຫ້ເກີດອຸປະຕິເຫດຫຼັກແມ່ນເກີດຂຶ້ນຍ້ອນຫຍັງ ເພື່ອໃຫ້ລຸດຜ່ອນຈຳນວນ 38 ຄົນຕໍ່ປີ.
- ການໂຄສະນາຜ່ານໂທລະໂຄ່ງ 12 ແຂວງ ສະເໜີໃນເອົາເຂົ້າເພີ່ມໃນຂອບເຂກທົ່ວປະເທດໃນປີ 2025.
- ສະເໜີໃຫ້ປັບປຸງເບີສາຍດ່ວນ 1603 ໃຫ້ສາມາດໂທໄດ້ ໃນ 24 ຊົ່ວໂມງ.
- ສະເໜີໃຫ້ອົງການປະຕິບັດງານທົບທວນຄູຝຶກ ຫຼືນັກໂຄສະນາຄືນຕື່ມ ເພື່ອໃຫ້ການໂຄສະນາໄປໃນທິດທາງດຽວກັນ ແລະ ມີປະສິດທິຜົນ.
- ກອງປະຊຸມສະເໜີໃຫ້ ອົງການ ສປຊ ຈັດກອງປະຊຸມ ເພື່ອເຜີຍແຜ ຜົນຂອງການສຶກສາສຳຫຼວດທັດສະນະຄະຕິຄວາມຮູ້ຂອງການໂຄສະນາ ( KapSurvey ) ເພື່ອທຸກພາກສ່ວນຮັບຊາບ ແລະ ຈັດຕັ້ງປະຕິບັດ.

- ກອງປະຊຸມສະເໜີໃຫ້ ອົງການ ສປຊ ຈັດກອງປະຊຸມ ເພື່ອເຜີຍແຜ ຜົນຂອງການສຶກສາສຳຫຼວດທັດສະນະຄະຕິຄວາມຮູ້ຂອງການໂຄສະນາ ( KapSurvey ) ເພື່ອທຸກພາກສ່ວນຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ກອງປະຊຸມສະເໜີອົງການປະຕິບັດງານເພີ່ມທະວີວຽກງານປະສານງານຮ່ວມກັນ ລະຫວ່າງອົງການປະຕິບັດງານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອສະດວກໃນການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃຫ້ດີຂຶ້ນກວ່າເກົ່າ.
- ອົງການເອັນພີເອສະເໜີ ການໂຄສະນາຂອງອົງການຕ່າງແມ່ນເຂົ້າເຖິງກຸ່ມເປົ້າໝາຍ ແຕ່ ປະຊາຊົນບາງຈຳນວນຍັງມີຄວາມເຊື່ອແບບງົມງວາຍ ແລະ ບໍ່ຄອຍໃຫ້ຄວາມຮ່ວມມືໃນຂະນະທີ່ທີມງານລົງມາໂຄສະນາ.
- ອົງການເອັດໄອ ລາຍງານ ອົງການນີ້ແມ່ນເລີມໂຄສະນາຜ່ານໂທລະພາບ ແລະ ຕິກຕອກ ຢູ່ໃນ ມິຖຸນາ 2024 ນີ້.
- ອົງການເທີລາ ຂໍອຸປະກອນການໂຄສະນາ ເພື່ອນຳໄປວາງສະແດງຢູ່ສູນຂອງການເທີລ່າ ຕໍ່ບັນຫານີ້ ຫ້ອງການຄຊກລ ກໍ່ແນະນຳແລະ ສະເໜີໃຫ້ສົ່ງໜັງມາເປັນທາງການວ່າຕ້ອງແບບໃດຈາກໜ່ວຍງານໃດ ພວກເຮົາຍິນດີຕອບສະໜອງໃຫ້.
- ສູນກາງຊາວໜຸ່ມສະເໜີງົບປະມານສືບຕໍ່ໃນການຈັດຕັ້ງປະຕິບັດ ແລະ ລົງຕິດຕາມ ກຸ່ມອາສາສະໝັກບ້ານທີ່ໄດ້ຝຶກໄປໃຫ້ນັ້ນ ເພື່ອຕິດຕາມຄວາມຄືບໜ້າ.
- ວິທະຍຸຂໍງົບປະມານເພື່ອມາໂຄສະນາແບບອອນໄລ ແລະ ພະລິດສະປອດໂຄສະນາ ເພື່ອນຳໄປໂຄສະນາຕໍ່ໃນໂທລະໂຄ່ງໂຮງຮຽນ.
- ອົງການຮ່າໂລທັດສະເໜີ ການເຂົ້າເຖິງກຸ່ມເປົ້າໝາຍແມ່ນຍຸ້ງຍາກ ເນື່ອງຈາກ ຂອບເຂດບ້ານທີ່ເກີດອຸປະຕິເຫດສ່ວນຫຼາຍແມ່ນຢູ່ຫ່າງໄກຊອກຫຼີກການເດີນທາງບໍ່ຄອຍສະດວກມີຄວາມຫຍຸ້ງຍາກ.
- ກອງປະຊຸມສະເໜີ ໃຫ້ໜ່ວຍງານຄຸ້ມຄອງໂຄສະນາເປັນເຈົ້າການ ໃນການຕິດຕາມຊຸກຍູ້ ບັນດາອົງການປະຕິບັດງານ ເພາະບາງອົງການບໍ່ໄປຕາມແຜນເຄື່ອນໄຫວ ເຊິ່ງສະແດງອອກໃນຕົວຊີ້ວັດໜ້າວຽກ.
- ກອງປະຊຸມສະເໜີໃນເວລານັກໂຄສະນາລົງໄປໂຄສະນາໃຫ້ນຳເອົາມາດຕະການຕໍ່ກັບຜູ້ຊື້ຂາຍເສັ້ກເສດສະເພາະໃຫ້ມີມາດຕະການຢ່າງເດັດຂາດ ໂດຍສະເພາະຄຳສັ່ງ ເລກທີ 39/ນຍ ເພື່ອເປັນບ່ອນອີງ.
- ກອງປະຊຸມສະເໜີການປະສານງານ ເນື່ອງຈາກວ່າມີບາງວຽກຍັງໄດ້ຕິດພັນກັບພະແນກ ແຮງງານ ແລະສະຫວັດດີການສັງຄົມ, ສະນັ້ນ ເປັນໄປໄດ້ບໍ່ທີ່ຕ້ອງໄດ້ປະສານກັບສອງພາກສ່ວນໄປນຳກັນ. ຕໍ່ບັນຫານີ້ທັງພາກສ່ວນທີ່ກ່ຽວຂ້ອງກໍ່ໄດ້ຊີ້ແຈງຢ່າງລະອຽດ ເປັນຕົ້ນແມ່ນ ສະເພາະວຽກງານໂຄສະນາສຶກສາຄວາມສ່ຽງໄພແມ່ນໃຫ້ປະສານໄປຫາພະແນກກແຮງງານ ແລະ ສະຫວັດດີການສັງຄົມເປັນຈຸດປະສານງານຫຼັກ. ຜ່ານມາເຫັນວ່າການປະສານງານບາງອົງການຍັງບໍ່ໄປລວງດຽວກັນ, ຊຶ່ງມັນສະແດງອອກເວລາລົງຕິດຕາມຊຸກຍູ້ ແລະປະເມີນຜົນ.
- ສະເໜີໃຫ້ເອົາມາດຕະການການຄຸ້ມຄອງສື່ເຂົ້າໃນການປັບປຸງມາດຕະຖານແຫ່ງຊາດ ບົດທີ 13, ທີ່ຕິດພັນກັບວຽກໂຄສະນາ.
- ການອອກຂ່າວກ່ຽວກັບອຸປະຕິເຫດເຫັນວ່າສື່ອອນລາຍຂ້ອນຂ້າງອອກໄວກວ່າພວກເຮົາ, ສະນັ້ນພວກເຮົາຄວນມີມາດຕະການແນວໃດເພື່ອປັບປຸງຈຸດນີ້ ເພື່ອຕອບສັງຄົມ.
- ສະເໜີໃຫ້ແຕ່ລະອົງການປະຕິບັດງານເອົາບົດບາດຍິງຊາຍເຊື່ອມສານເຂົ້າໃນວຽກງານຂອງທ່ານຕື່ມ ແລະ ເບິ່ງຄືນດ້ານນະໂຍບາຍຕ່າງໆທີ່ຕິດພັນກັບກັບ ກົດໝາຍແຮງງານ.

**VI. ກອງປະຊຸມໄດ້ສະຫຼຸບ ແລະ ຕົກລົງ**

1. ກອງປະຊຸມໄດ້ຮັບຟັງ ການລາຍງານຜົນການຈັດຕັ້ງປະຕິບັດວຽກງານໂຄສະນາໃນ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການໃນ 6 ເດືອນ ທ້າຍປີ ພ້ອມນີ້ກອງປະຊຸມໄດ້ສ່ອງແສງໃຫ້ເຫັນສາເຫດທີ່ພາໃຫ້ເກີດອຸປະຕິເຫດ ແລະ ວິທະແກ້ໄຂ.
2. ການໂຄສະນາບາງຄັ້ງຍັງບໍ່ທັນທົ່ວເຖິງຈຶ່ງເຮັດໃຫ້ເກີດມີອຸປະຕິເຫດເນື່ອຈາກມີຄວາມຈຳກັດດ້ານ ງົບປະມານອື່ນໆ.
3. ໃນຕໍ່ໜ້າການການຂະຫຍາຍຕາໜ່າງການໂຄສະນາແມ່ນໂຄສະນາໂທລະໂຄ່ງໂຮງຮຽນ ແລະ ອາດຈະເພີ່ມດ້ານສື່ອອນລາຍເຂົ້າຊ່ວຍ.
4. ການເຂົ້າເຖິງກຸ່ມເປົ້າໝາຍຕ້ອງໄດ້ນຳໃຊ້ມາດຕະການເຂົ້າຊ່ວຍໃນການຈັດຕັ້ງປະຕິບັດ.
5. ການໂຄສະນາແມ່ນໃຫ້ເພີ່ມຄຳສັ່ງ ເລກທີ 39/ນຍ ເພື່ອແນະນຳໃຫ້ກຸ່ມເປົ້າໝາຍຮັບຮູ້.
6. ການປັບປຸງມາດຕະຖານແຫ່ງຊາດແມ່ນຕ້ອງໄດ້ເອກະພາບກັບອົງການປະຕິບັດງານ ເພາະອົງການປະຕິບັດງານເປັນຈັດຕັ້ງປະຕິບັດ, ຕໍ່ບັນຫານີ້ສະເໜີໜ່ວຍງານໂຄສະນາຮ່າງໜັງສືແຈ້ງການອອກໄປໃຫ້ອົງການປະຕິບັດງານ ເພື່ອປະກອບຄຳເຫັນໃສ່ບົດດັ່ງກ່າວນີ້.
7. ສະເໜີໃຫ້ອົງການປະຕິບັດງານນຳໃຊ້ແບບຟອມທີ່ ອົງການເອັນພີເອໄດ້ນຳສະເໜີນີ້ ເພື່ອໃຫ້ມີຄວາມວອງໄວ ແລະ ທັນສະໄໝ ກວ່າເກົ່າ ແລະ ທັນກັບສະພາບການ.
8. ກອງປະຊຸມໄດ້ຮັບຟັງການຈັດຕັ້ງປະຕິບັດ ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນ 2 ໄຕມາດ ທີ່ຜ່ານມາ ພ້ອມສິ່ງທ້າທາຍອື່ນໆ ເຫັນວ່າໄປໄດ້ດ້ວຍດີ, ແຕ່ມີຂໍ້ສັງເກດເວລາເກີດອຸປະຕິເຫດນັ້ນ.
9. ການໂຄສະນາຄວນມີຂອງລາງວັນ ຫຼື ຂອງຂັວນເລັກນ້ອຍໃຫ້ຜູ້ເຂົ້າຮ່ວມຮັບຟັງ ເພື່ອເປັນການດຶງດູດຜູ້ເຂົ້າຮ່ວມ.
10. ກອງປະຊຸມໄດ້ຮັບຟັງການຂາດງົບປະມານໃນການຈັດຕັ້ງປະຕິບັດ ແລະ ການລົງຕິດຕາມຊຸກຍູ້ ໂດຍສະເພາະໜ່ວຍງານຄຸ້ມຄອງການໂຄສະນາບໍ່ມີງົບປະມານໃນການລົງຕິດຕາມຊຸກຍູ້ອົງການປະຕິບັດງານ, ບໍ່ມີງົບປະມານສືບຕໍ່ໃນການຝຶກອົບຮົມໃຫ້ແກ່ ອາສາສະໝັກຂັ້ນບ້ານ ແລະ ລົງຕິດຕາມອາສາສະໝັກທີ່ໄດ້ຈັດຕັ້ງປະຕິບັດນັ້ນມີຄວາມຄືບໜ້າແບບໃດ.
11. ການປະກອບຄຳເຫັນຕໍ່ສື່ໂຄສະນາແມ່ນສະເໜີໃຫ້ເອົາລົງກຸ່ມເລີຍເພື່ອສະດວກໃນການຄົ້ນຄ້ວາດ້ານວິຊາການກ່ອນ.
12. ສະເໜີໃຫ້ອົງການສົ່ງສື່ໂຄສະນາ ເພື່ອນຳມາເຂົ້າ E-EORE Library.
13. ສະເໜີໃຫ້ອົງການເຊື່ອມສານບົດບາດຍິງຊຸ່ຍເຂົ້າໃນວຽກງານໂຄສະນາ.

ກອງປະຊຸມໄດ້ປິດລົງໃນ ວັນທີ 14 ມິຖຸນາ 2024 ໃນມື້ດຽວກັນ.

ປະທານກອງປະຊຸມ

ດວງສີ ທຳມະວົງ

ຜູ້ບັນທຶກກອງປະຊຸມ